# ຄໍາຫຍໍ້

| | |
|---|---|
| ການຟື້ນຟູຊຸມຊົນຂັ້ນພື້ນຖານ | CBR |
| ການຈໍາແນກພຶດຕິກໍາເພື່ອການຮັກສາ | CBT |
| ສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ລະເບີດລູກຫວ່ານ | CCM |
| ອົງການໂຄບ | COPE |
| ສົນທິສັນຍາວ່າດ້ວຍການປົກປ້ອງສິດທິຄົນພິການ | CRPD |
| ຈຸດປະສານງານຂັ້ນເມືອງ | DFP |
| ອົງການສໍາລັບຄົນພິການ | DPO |
| ລັດຖະບານແຫ່ງ ສປປ ລາວ | GOL |
| ກອງທຶນເພື່ອສຸຂະພາບ | HEF |
| ລະບົບການຄຸ້ມຄອງຖານຂໍ້ມູນລະເບີດຝັງດິນ | IMSMA |
| ອົງການສາກົນທີ່ບໍ່ສັງກັດລັດ | INGO |
| ສະມະຄົມຄົນພິການແຫ່ງຊາດລາວ | LDPA |
| ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ກະຊວງ ຮສສ |
| ກະຊວງສຶກສາທິການ ແລະ ກິລາ | MoE |
| ກະຊວງການຕ່າງປະເທດ | MoFA |
| ກະຊວງສາທາລະນະສຸກ | MoH |
| ກະຊວງຄົມມະນາຄົມ ແລະ ຂົນສົ່ງ | MPW&T |
| ຄະກໍາມະການແຫ່ງຊາດ ເພື່ອຄົນພິການ | NCDP |
| ສະມະຄົມທີ່ບໍ່ອັງຜົນກໍາໄລ | NPA |
| ຄະນະກໍາມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດ ຄຊກລບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ | ຄຊກລ |
| ຜູ້ປະສານງານຂັ້ນແຂວງ | PFP |
| ພະແນກສາທາລະນະສຸກ | PHO |
| ຄົນພິການ | PWD |
| ກອງປະຊຸມຂະແໜງການ | SWG |
| ກອງປະຊຸມກຸ່ມວິຊາການ | TWG |

| | |
|---|---|
| ອົງການສະຫະປະຊາຊາດ | ສປຊ |
| ລະເບີດບໍ່ທັນແຕກທີ່ຕົກຄ້າງ | ລບຕ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ | VA |
| ອົງການອະນາໄມໂລກ | WHO |
| ກອງທຶນການປິ່ນປົວດ້ານການແພດສຳລັບຜູ້ຖືກເຄາະຮ້າຍ | WVMF |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະກຳມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ: _____/ຄຊກລ
ນະຄອນຫຼວງວຽງຈັນ, ວັນທີ:……………

# ແຜນຍຸດທະສາດ
# ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ
# ຈາກລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ
# ສຳລັບ 2014 – 2020

## ພາກ I. ພາກແນະນຳ

ຖ້າສະເລັ່ຍໃສ່ຫົວຄົນແລ້ວ ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດຫຼາຍທີ່ສຸດໃນປະຫວັດສາດຂອງໂລກ. ນັບແຕ່ປີ 1964 ເຖິງປະຈຸບັນມີປະຊາຊົນລາວບັນດາເຜົ່າ 50,000 ກວ່າຄົນໄດ້ຮັບບາດເຈັບ ແລະ ເສັຍຊີວິດຍ້ອນ ລບຕ, ໃນນີ້ ລວມມີລະເບີດລູກຫວ່ານ. ປະມານ 30,000 ກວ່າຄົນ ໄດ້ຖືກເຄາະຮ້າຍໃນສົງຄາມອິນດູຈີນ ( ເຖິງປີ 1973) ແລະ 20,000 ກວ່າຄົນໄດ້ ຖືກເຄາະຮ້າຍພາຍຫຼັງສົງຄາມ(ຈາກປີ 1973 ເຖິງປີ 2012), ສະເພາະປີ 2011 ມີຜູ້ຖືກເຄາະຮ້າຍຈຳນວນ 99 ຄົນ.ຈາກການສຳຫຼວດໃນທົດສະຫວັດທີ່ຜ່ານມາ ສະຖິຕິຜູ້ຖືກເຄາະຮ້າຍໃນກຸ່ມເດັກນ້ອຍມີປະມານ 40%, ທຽບໃສ່ຈຳນວນຜູ້ຖືກເຄາະຮ້າຍທັງໝົດ.[1].

ໃນເດືອນທັນວາ ປີ 2008 ສປປ ລາວ ໄດ້ເຊັນຮັບຮອງເປັນລັດພາຄີຕໍ່ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ແລະ ໄດ້ໃຫ້ສັດຕະຍາບັນໃນເດືອນມີນາ ປີ 2009. ສົນທິສັນຍາດັ່ງກ່າວປະກອບມີພັນທະຕ່າງໆກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ ແລະ ລະເບີດບໍ່ທັນແຕກປະເພດອື່ນໆ. ມາດຕາ 5 ໄດ້ລະບຸພັນທະການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕາມກົດໝາຍວ່າດ້ວຍສິດທິມະນຸດ, ບົນພື້ນຖານບົດບາດຍິງຊາຍ, ບໍ່ຈຳແນກ, ເຊື່ອມໂຍງເຂົ້າໃນກອບ ແລະ ອັນກ່ຽວຂ້ອງຕ່າງໆກັບຜູ້ຖືກເຄາະຮ້າຍ. ຫຼັກການພື້ນຖານໃນ ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານໄດ້ລະບຸວ່າແຕ່ລະລັດພາຄີ "ບໍ່ຈຳແນກກຸ່ມຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານເອງ ແລະ ບໍ່ຈຳແນກຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານ ແລະ ຜູ້ຖືກບາດເຈັບ ແລະ ພິການຍ້ອນ

[1]ບົດລາຍງານປະຈຳປີ 2011 ຂອງຂະແໜງການ ລບຕ

ສາເຫດອື່ນ"; ຄວາມແຕກຕ່າງການຊ່ວຍເຫຼືອຈະມີໄດ້ສະເພາະໃນຄວາມຕ້ອງການ ປິ່ນປົວການແພດ, ການຟື້ນຟູໜ້າທີ່ການ, ການຟື້ນຟູດ້ານຈິດໃຈ ແລະ ເສດຖະກິດ-ສັງຄົມ[2]. ໃນເນື້ອໃນຂອງສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແມ່ນ ກວມເອົາວຽກເກັບກຳຂໍ້ມູນ, ກົດໝາຍ, ນະໂຍບາຍຕ່າງໆ ແລະ ການປະຕິບັດການປິ່ນປົວການແພດ, ການຟື້ນຟູໜ້າທີ່ການ, ການຟື້ນຟູດ້ານຈິດໃຈ ແລະ ເສດຖະກິດ-ສັງຄົມ.

ໃນເດືອນມັງກອນ ປີ 2008 ສປປ ລາວ ຍັງໄດ້ເຊັນຮັບຮອງເປັນລັດພາຄີຕໍ່ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ໄດ້ໃຫ້ສັດຕະຍາບັນໃນເດືອນ ກັນຍາ ປີ 2009. ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການມີເນື້ອໃນລະອຽດກ່ຽວກັບການສະໜັບສະໜູນຄວາມຕ້ອງການຂອງຄົນພິການ ແລະ ສິດຂອງຜູ້ພິການ, ລວມທັງຜູ້ຖືກເຄາະຮ້າຍທີ່ລອດຊີວິດຈາກ ລບຕ.

ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ໄດ້ຮັບການສ້າງຕັ້ງຂຶ້ນ, ມີໜ້າທີ່ເປັນເສນາທິການໃຫ້ ຄະນະກຳມະການແຫ່ງຊາດ ເພື່ອການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ, ຊຶ່ງເປັນສະຖາບັນການຈັດຕັ້ງຂອງລັດຖະບານແຫ່ງ ສປປ ລາວ ແລະ ໄດ້ຮັບການໜັບສະໜູນຈາກອົງການ ສປຊ.

ຫ້ອງການ ຄຊກລ ມີໜ້າທີ່ໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນຂອບເຂດທົ່ວປະເທດ. ເພື່ອເປັນບ່ອນອີງການປະສານງານ ແລະ ການວາງແຜນເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍສອດຄ່ອງກັບພັນທະທີ່ໄດ້ລະບຸໄວ້ຢູ່ໃນສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ຄຊກລ ໄດ້ຮ່າງ ແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃນປີ 2011. ແຜນຍຸດທະສາດນີ້ ໄດ້ຜ່ານການປຶກສາຫາລືເປັນເອກະພາບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆ, ໄດ້ຜ່ານກອງປະຊຸມກຸ່ມວິຊາການທີ່ເຮັດວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ໃນປີ 2012 ໄດ້ທົບທວນຄືນ ແລະ ປັບປຸງເນື້ອໃນໃຫ້ສົມບູນຂຶ້ນຕື່ມ. ໃນວັນທີ 29 ພຶດສະພາ 2013 ແຜນປະຕິບັດງານດັ່ງກາວໄດ້ຜ່ານການຮັບຮອງຈາກກອງປະຊຸມຄະນະກຳມະການ ຄຊກລ.

ມາດຕາ 2.1 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ໄດ້ໃຫ້ນິຍາມຜູ້ຖືກເຄາະຮ້າຍຈາກລະເບີດລູກຫວ່ານວ່າ: "ທຸກຄົນທີ່ເສັຍຊີວິດ ແລະ ພິການທາງຮ່າງກາຍ ຫຼື ຈິດໃຈ, ສູນເສຍດ້ານເສດຖະກິດ, ມີຂໍ້ຈຳກັດທາງດ້ານສັງຄົມ ຫຼື ຕໍ່ການໃຊ້ສິດຕ່າງໆ ອັນເນື່ອງມາຈາກອຸປະຕິເຫດຂອງລະເບີດລູກຫວ່ານ ໂດຽລວມເອົາຜູ້ຖືກກະທົບໂດຍກົງ, ຄອບຄົວ ແລະ ຊຸມຊົນ". ແນວໃດກໍ່ຕາມ, ແຜນຍຸດທະສາດນີ້ເປັນສະບັບທຳອິດທີ່ມີເປົ້າໝາຍສຸມໃສ່ຊ່ວຍເຫຼືອຜູ້ທີ່ຖືກກະທົບແຕ່ລະຄົນ ແລະ ຕໍ່ ຄອບຄົວແລະ ຊຸມຊົນສ່ວນໜຶ່ງ. ໃນການປະຕິບັດ ແຜນຍຸດທະສາດສະບັບນີ້ ຄຳສັບ "**ຜູ້ລອດຊີວິດ**" ໝາຍເຖິງຜູ້ຖືກກະທົບຈາກ ລບຕ ແຕ່ລະຄົນ ແລະ ຄຳສັບ"**ຜູ້ຖືກເຄາະຮ້າຍ**" ໝາຍເຖິງຜູ້ຖືກກະທົບໂດຍກົງ ລວມທັງຄອບຄົວ ແລະ ຊຸມຊົນ.

ຫ້ອງການ ຄຊກລ ເປັນໃຈກາງປະສານງານ ການປະຕິບັດມາດຕາ 05 ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ. ສະນັ້ນ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕ້ອງພັດທະນານະໂຍບາຍ, ປະສານງານກັບບັນດາປະທດຜູ້ໃຫ້ທຶນ ແລະ ອຳນວຍຄວາມສະດວກໃນການປະສານງານ ແລະ

[2]ວັກ 2 (ຈ), ມາດຕາ 5 ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ

ການເຊື່ອມໂຍງທີ່ດີໃນການຕອບສະໜອງສິດ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍຕາມກອບຂອງການຊ່ວຍເຫຼືອຄົນພິການ ແລະ ການພັດທະນາ.

ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ໄດ້ລະບຸໜ້າວຽກກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍລວມມີ ການປິ່ນປົວການແພດ, ການຟື້ນຟູໜ້າທີ່ການ, ການສະໜັບສະໜູນຟື້ນຟູດ້ານຈິດໃຈ ແລະ ການມີສ່ວນຮ່ວມໃນການຟື້ນຟູດ້ານເສດຖະກິດ-ສັງຄົມ. ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງຫ້ອງການ ຄຊກລ ບໍ່ແມ່ນໜ່ວຍງານຕອບສະໜອງການຊ່ວຍເຫຼືອໂດຍກົງໃຫ້ແກ່ຜູ້ຖືກເຄາະຮ້າຍແຕ່ເປັນໃຈກາງໃນການປະສານງານພົວພັນກັບບັນດາກະຊວງ, ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆທີ່ປະຕິບັດວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ບັນດາພາກສ່ວນຕົ້ນຕໍທີ່ປະຕິບັດກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃນປະຈຸບັນມີລາຍຊື່ດັ່ງລຸ່ມນີ້:

1. ກະຊວງສາທາລະນະສຸກ.
2. ກະຊວງສຶກສາທິການ ແລະ ກິລາ.
3. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
4. ສູນການແພດຟື້ນຟູໜ້າທີ່ການ.
5. ອົງການເວີລອີດີວເຄເຊີນ.
6. ສະມະຄົມພັດທະນາຄຸນນະພາບຊີວິດຂອງຜູ້ຖືກເຄາະຮ້າຍ.
7. ອົງການສາກົນເພື່ອຄົນພິການ.
8. ສະມະຄົມຊ່ວຍເຫຼືອ ແລະ ບັນເທົາທຸກແຫ່ງປະເທດຍີ່ປຸ່ນ.
9. ອົງການໂຄບ.
10. ສະມະຄົມຄົນພິການແຫ່ງຊາດ.
11. ສູນພັດທະນາແມ່ຍິງພິການລາວ.

ແຜນ**ຍຸດທະສາດ**ສະບັບນີ້ ແມ່ນສ້າງຂຶ້ນຢ່າງສອດຄ່ອງກັບສົນທິສັນຍາວ່າດ້ວຍ ການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ, ເປົ້າໝາຍສະຫະສະວັດເພື່ອການພັດທະນາລຳດັບ 9, ແຜນປະຕິບັດງານວຽງຈັນ, ແຜນປະຕິບັດງານຂອງອົງການອະນາໄມໂລກປີ 2011 ກ່ຽວກັບຄົນພິການ ແລະ ບັນດາແຜນຍຸດທະສາດແຫ່ງຊາດຕ່າງໆຂອງ ສປປ ລາວ ດັ່ງນີ້:

1. ແຜນຍຸດທະສາດການພັດທະນາ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ.
2. ແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກສຳລັບປີ 2011-2020 "ເສັ້ນທາງກ້າວໄປສູ່ຄວາມປອດໄພII".
3. ແຜນການພັດທະນາແຫ່ງຊາດ ຄັ້ງທີ 7 ຂອງຂະແໜງການສາທາລະນະສຸກປີ 2011-2015.
4. ແຜນຍຸດທະສາດການພັດທະນາດ້ານສາທາລະນະສຸກ.
5. ແຜນຍຸດທະສາດແຫ່ງຊາດດ້ານການເງິນກ່ຽວກັບວຽກງານສາທາລະນະສຸກປີ 2011-2015.
6. ແຜນຍຸດທະສາດການພັດທະນາສັງຄົມສົງເຄາະກະຊວງແຮງງານ ແລະ ສະຫວັດດີການສັງຄົມປີ 2011-2020.
7. ແຜນຍຸດທະສາດການພັດທະນາແຮງງານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມປີ 2011-2020.
8. ແຜນແມ່ບົດພັດທະນາວຽກງານສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ ປີ 2008-2015.

9. ແຜນຍຸດທະສາດການພັດທະນາດ້ານວິຊາການ, ການສຶກສາດ້ານວິຊາຊີບ ແລະ ການຝຶກອົບຮົມປີ 2006-2020.
10. ແຜນຍຸດທະສາດການສຶກສາວິໃສທັດເຖິງປີ 2020.
11. ແຜນຍຸດທະສາດແຫ່ງຊາດກ່ຽວກັບການສຶກສາຮຽນຮ່ວມຂອງກະຊວງສຶກສາທິການ ແລະ ກິລາ ປີ 2011-2015.

## ພາກ II. ກອບ ແລະ ແນວຄິດພື້ນຖານຂອງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

### 1. ກອບຂອງແຜນຍຸດທະສາດ.

**1.1. ວິໄສທັດ:** ແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍສະບັບນີ້ສ້າງຂຶ້ນ ເພື່ອເຮັດໃຫ້ ສປປ ລາວ ຫລຸດພົ້ນອອກຈາກໄພຂົ່ມຂູ່ຈາກ ລບຕ, ຮັບປະກັນໃຫ້ປະຊາຊົນແຕ່ລະຄົນ ແລະ ຊຸມຊົນສາມາດດໍາລົງຊີວິດໃນສະພາບແວດລ້ອມທີ່ປອດໄພ, ປະກອບສ່ວນເຂົ້າໃນການພັດທະນາ ແລະ ເປັນບ່ອນຊຶ່ງຜູ້ ຖືກເຄາະຮ້າຍຖືກເຈືອຈານເຂົ້າໃນສັງຄົມ ແລະ ມີການຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າເປັນຢ່າງດີ.

**1.2. ໜ້າທີ່ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ຄຊກລ:** ອໍານວຍຄວາມສະດວກ ໃນການປະສານງານ ແລະ ເຊື່ອມໂຍງການຕອບສະໜອງສິດ ແລະ ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ຕາມກອບຂອງຜູ້ພິການ ແລະ ການພັດທະນາ[3].

**1.3. ເປົ້າໝາຍລວມ:** ຮັບປະກັນໃຫ້ສິດທິ ແລະ ຄວາມຕ້ອງການຕ່າງໆຂອງຜູ້ຖືກເຄາະຮ້າຍ ໄດ້ຮັບການແກ້ໄຂ ໂດຍສອດຄ່ອງກັບພັນທະຂອງສົນທິສັນຍາສາກົນ ແລະ ລະບຽບກົດໝາຍຕ່າງໆພາຍໃນປະເທດ.

**1.4. ຈຸດປະສົງ:** ແຜນຍຸດທະສາດນີ້ສ້າງຂຶ້ນ ເພື່ອເປັນເຄື່ອງມືໃຫ້ແກ່ການແນະນໍາວຽກງານຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ຄຊກລ ຕາມກອບຂອງຜູ້ພິການ ແລະ ການພັດທະນາຢູ່ ສປປ ລາວ. ເປັນບາດກ້າວທໍາອິດທີ່ໄດ້ສ້າງແຜນປະຕິບັດງານແຫ່ງຊາດ ໂຍງໄຍລະຫວ່າງ ບັນດາກະຊວງ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງເຂົ້າກັນ ແລະ ເປັນຕົວແທນໃຫ້ແກ່ຜູ້ມີສ່ວນຮ່ວມຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢູ່ ສປປ ລາວ.

**1.5. ງົບປະມານ:** ຄວາມຕ້ອງການງົບປະມານທັງໝົດ ທີ່ຈະປະຕິບັດ 7 ເສົາຄໍ້າຫຼັກສາມາດຄິດໄລ່ໄດ້ກໍ່ຕໍ່ເມື່ອບັນດາກະຊວງ, ອົງການທຽບເທົ່າ ໃຫ້ການສະໜັບສະໜູນ, ໃຫ້ຄໍາໝັ້ນສັນຍາ ແລະ ເອົາເຂົ້າໃນແຜນງົບປະມານຂອງຕົນ.

ໃນເວລານີ້ ຄຊກລ ສາມາດຂຶ້ນແຜນງົບປະມານສະເພາະວຽກງານເສົາຄໍ້າທີ 1 ກິດຈະກໍາກ່ຽວກັບການເກັບກໍາຂໍ້ມູນ ແລະ ເສົາຄໍ້າທີ 7: ກິດຈະກໍາກ່ຽວກັບການປະສານງານ.

### 2. ແນວຄິດພື້ນຖານຂອງແຜນແຜນຍຸດທະສາດ.

2.1. ກິດຈະກໍາສ່ວນໃຫ່ຽ ທີ່ຮັບຮູ້ໂດຽທົ່ວກັນຕໍ່ກັບ "ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ" ໃນກອບຂອງສົນທິສັນຍາວ່າດ້ວຍການເກືອດຫ້າມ ການນໍາໃຊ້ລະເບີດລູກຫວ່ານ ພື້ນຖານແລ້ວ ແມ່ນກ່ຽວຂ້ອງກັບຄວາມພະຍາຍາມອໍານວຍຄວາມສະດວກທາງສັງຄົມ ແລະ ໄດ້ເຂົ້າເຖິງສິດຕ່າງໆຂອງຜູ້ລອດຊີວິດ.

2.2. ຄໍາວ່າ: "ຜູ້ຖືກເຄາະຮ້າຍ" ແມ່ນລວມເຖິງບຸກຄົນທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດໂດຍກົງຍ້ອນອຸປະຕິເຫດຈາກ ລບຕ, ລວມທັງລະເບີດລູກຫວ່ານ ແລະ ຄອບຄົວຕະຫຼອດຮອດຊຸມຊົນທີ່ໄດ້ຮັບຜົນກະທົບ. ດ້ວຍເຫດນັ້ນ, ນອກຈາກຜູ້ລອດຊີວິດແລ້ວ ຄອບຄົວ ແລະ ຊຸມຊົນ ກໍ່ ຄວນຈະໄດ້ຮັບຜົນປະໂຫຽດຈາກໂຄງການຫຼຸດຜ່ອນຜົນກະ

[3] ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍແມ່ນໄດ້ກໍານົດໂດຍສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ລະເບີດລູກຫວ່ານ ຊຶ່ງປະກອບມີ ການປິ່ນປົວດ້ານການແພດ, ການຟື້ນຟູໜ້າທີ່ການ, ການຟື້ນຟູດ້ານຈິດໃຈ ແລະ ການມີສ່ວນຮ່ວມດ້ານເສດຖະກິດ-ສັງຄົມ.

ທີ່ບຈາກ ລບຕ . ການຊ່ວຍເຫຼືອຄອບຄົວ ແລະ ຊຸມຊົນເປັນສ່ວນໜຶ່ງຂອງແຜນງານ ເພື່ອຮັບປະກັນໃຫ້ຄອບຄົວສະໜັບສະໜູນຊ່ວຍເຫຼືອຜູ້ທີ່ລອດຊີວິດໄດ້ເປັນຢ່າງດີ ແລະ ຊຸມຊົນສາມາດເຮັດໃຫ້ຜູ້ທີ່ລອດຊີວິດມີສ່ວນຮ່ວມໃນທຸກກິດຈະກໍາພັດທະນາ[4].

2.3. ການປະ ຕິບັດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແມ່ນອີງໃສ່ຫຼັກການ ບໍ່ຈໍາແນກໃດໆ ດັ່ງທີ່ໄດ້ ລະບຸໄວ້ຢ່າງລະອຽດໃນສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ລະເບີດລູກຫວ່ານ.

2.4. ຜູ້ລອດຊີວິດສ່ວນຫລາຍ ແມ່ນນອນຢູ່ໃນກຸ່ມຄົນພິການໃນຂະນະທີ່ແຜນປະຕິບັດງານແຫ່ງຊາດນີ້ ພັດອ້າງເຖິງແຕ່ຜູ້ລອດຊີວິດ ແຕ່ໃຫ້ເຂົ້າໃຈວ່າ ບັນດາກົດໝາຍ, ຍຸດທະສາດ, ນະໂຍບາຍຕ່າງໆ, ແຜນການ ແລະ ໂຄງການທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈະບໍ່ແຍກຈາກກຸ່ມຄົນພິການບໍ່ວ່າດ້ວຍທາງກົງ ຫຼື ທາງອ້ອມ. ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແມ່ນອີງໃສ່ຫຼັກການ ແລະ ແນວຄິດຕ່າງໆຂອງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ[5].

2.5. ຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ທັງໝົດບໍ່ເປັນຜູ້ພິການຕະຫຼອດໄປ. ຜູ້ລອດຊີວິດຫຼາຍຄົນໄດ້ຟື້ນຈາກບາດເຈັບໜັກ ບໍ່ພິການທາງກາຍ. ແນວໃດກໍ່ຕາມ , ຄວາມສາມາດທາງ ເສດຖະກິດ-ສັງຄົມ ແລະ ສຸຂະພາບຈິດ ຂອງເຂົາເຈົ້າ ອາດຖືກຈໍາກັດຍ້ອນອຸປະຕິເຫດ ລບຕ, ຊຶ່ງຕ້ອງມີການປະນີປະນອມໃນໄລຍະການປິ່ນປົວ. ດ້ວຍເຫດນັ້ນ, ຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ທຸກຄົນຕ້ອງເຂົ້າເຖິງການບໍລິການຕ່າງໆ, ໄດ້ຮັບການສືບຕໍ່ຊ່ວຍເຫຼືອພາຍຫຼັງຟື້ນຟູຕາມທີ່ຕ້ອງການ.

2.6. ຜູ້ລອດຊີວິດ ແມ່ນກຸ່ມຄົນທີ່ເໝາະສົມ ທີ່ຈະແຈ້ງໃຫ້ຜູ້ວາງນະໂຍບາຍແກ້ໄຂຕາມສິດ ແລະ ຄວາມຕ້ອງການຂອງເຂົາເຈົ້າ. ແຜນປະຕິບັດງານແຫ່ງຊາດນີ້ເປັນຫຼັກຖານໃຫຍ່ໃນການໃຫ້ອໍານາດ ແນໃສ່ໃຫ້ ຜູ້ຖືກເຄາະຮ້າຍຕ້ອງໄດ້ເຂົ້າຮ່ວມ ແລະໄດ້ຮັບປະໂຫຽດຈາກແຜນພັດທະນາ, ນະໂຍບາຍ ແລະ ໂຄງການຕ່າງໆ ທັງຢູ່ສູນກາງ ແລະທ້ອງຖິ່ນ.

2.7. ປະສິດທິພາບ, ມີປະສິດທິຜົນ ແລະ ຄວາມຍືນຍົງຂອງແຜນການ ແລະ ໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຕ້ອງປະສົມປະສານກັບ, ຫຼື ຢ່າງນ້ອຍຕ້ອງເຊື່ອມໂຍງ ກັບແຜນຍຸດທະສາດ, ກອບ ແລະ ກົນໄກການພັດທະນາຜູ້ພິການແຫ່ງຊາດ, ແຜນການພັດທະນາ ແລະ ສິດທິມະນຸດ. (ຄັດຈາກມາດຕາ 5 ວັກ 2 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ລະເບີດລູກຫວ່ານ).

2.8. ການບູລະນາການທີ່ດີ ແລະ ການປະສານງານທີ່ເປັນລະບົບລະຫວ່າງບັນດາກະຊວງ ແລະ ຂະແໜງການ, ເຕົ້າໂຮມຄູ່ຮ່ວມງານຕ່າງໆເຂົ້າດ້ວຍກັນເປັນສິ່ງຈໍາເປັນເພື່ອຮັບປະກັນຄວາມຍືນຍົງໃນການມີສ່ວນຮ່ວມ ແລະ ການຢູ່ໃນສັງຄົມຂອງຜູ້ລອດຊີວິດເປັນຢ່າງດີ.

---

[4]ຄໍາສະເໜີແນະຕໍ່ແຜນການຊ່ວຍເຫຼືອແຫ່ງຊາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ 2011-2012 ອົງການສາກົນເພື່ອຄົນພິການ 2011

[5]ຄໍາສະເໜີແນະຕໍ່ແຜນການຊ່ວຍເຫຼືອແຫ່ງຊາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ 2011-2012 ອົງການສາກົນເພື່ອຄົນພິການ 2011

## ພາກ III. ບັນດາກິດຈະກຳຂອງແຜນຍຸດທະສາດ

**1. ເກັບກຳຂໍ້ມູນ: ເກັບກຳຂໍ້ມູນອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍ** (ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ມາດຕາ 5 ວັກ 1, ແລະ ວັກ 2 ກ; ມາດຕາ 7 ວັກ 1 ມ, ແຜນປະຕິບັດງານວຽງຈັນຂໍ້ 22 ແລະ ຂໍ້ 25).

1.1. **ເກັບກຳຂໍ້ມູນອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍໃຫ້ຖືກຕ້ອງ ແລະ ຊັດເຈນ.**

**- ກິດຈະກຳ.**

1.1.1. ປະສານກັບອຳນາດການປົກຄອງທ້ອງຖິ່ນ ເພື່ອສືບຕໍ່ເກັບກຳ ແລະ ລາຍງານຂໍ້ມູນອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍຈາກຜູ້ປະສານງານຂັ້ນເມືອງ ຜ່ານຂັ້ນແຂວງ ແລະ ລາຍງານໃຫ້ຫ້ອງການ ຄຊກລ.

1.1.2. ສືບຕໍ່ຈັດກອງປະຊຸມສຳມະນາ ເພື່ອສ້າງຄວາມອາດສາມາດໃຫ້ຜູ້ປະສານງານຂັ້ນແຂວງ ແລະ ຂັ້ນເມືອງກ່ຽວກັບການເກັບກຳ ແລະ ລາຍງານຂໍ້ມູນການເກີດອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍ.

1.1.3. ຕິດຕາມ ແລະ ປະເມີນຜົນການປະຕິບັດງານຂອງບັນດານັກເກັບກຳຂໍ້ມູນ ເພື່ອຮັບປະກັນການເກັບກຳຂໍ້ມູນໃຫ້ຖືກຕ້ອງ ແລະ ຊັດເຈນ.

1.1.4. ປະສານກັບຜູ້ປະສານງານຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອເພີ່ມການປູກຈິດສຳນຶກ ແລະ ສ້າງຄວາມອາດສາມາດໃຫ້ອຳນາດການປົກຄອງຂັ້ນບ້ານ ເພື່ອໃຫ້ສາມາດລາຍງານການເກີດອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍໃຫ້ຖືກຕ້ອງ.

1.1.5. ສ້າງລະບຽບການ ເພື່ອຄຸ້ມຄອງການໂອນຖ່າຍຂໍ້ມູນໃຫ້ຖານຂໍ້ມູນຂ່າວສານ ລບຕ.

1.1.6. ຮັບປະກັນໃຫ້ຂໍ້ມູນຕ່າງໆທີ່ຖືກເກັບກຳນັ້ນແມ່ນຂໍ້ມູນອຸປະຕິເຫດ ແລະ ຜູ້ລອດຊີວິດຈາກ ລບຕ.

**- ຜູ້ຮັບຜິດຊອບ:** ຄຊກລ ແລະ ຜູ້ປະສານງານຂັ້ນແຂວງ ແລະ ຂັ້ນເມືອງ.

- **ໄລຍະເວລາ: 2014-2020.**

**1.2. ຊຸກຍູ້ສ້າງລະບົບການຮ່ວມມືກັບຂະແໜງການພິການ ເພື່ອເກັບຂໍ້ມູນ ການບໍລິການຜູ້ຖືກເຄາະຮ້າຍ.**

**- ກິດຈະກຳ.**

1.2.1. ປະສານເພື່ອເຊື່ອມຕໍ່ຂໍ້ມູນຂອງຫ້ອງການ ຄຊກລ, ສະມາຄົມຄົນພິການແຫ່ງຊາດລາວ, ຄະນະກຳມະທິການແຫ່ງຊາດເພື່ອຄົນພິການ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ບັນດາອົງການຈັດຕັ້ງທາງສັງຄົມ.

1.2.2. ປະສານກັບສູນສະຖິຕິແຫ່ງຊາດ ເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍ ແລະ ຄົນພິການໃນບັ້ນສຳຫຼວດເກັບກຳຂໍ້ມູນປະຊາກອນໃນຄັ້ງໜ້າ.

1.2.3. ປະສານ ກັບຄະນະກຳມະການແຫ່ງຊາດເພື່ອຄົນພິການ ກ່ຽວກັບຂະບວນການ ເກັບກຳຂໍ້ມູນຄົນພິການ, ຊຶ່ງຕ້ອງລວມມີຂໍ້ມູນຜູ້ຖືກເຄາະຮ້າຍ.

**- ຜູ້ຮັບຜິດຊອບ:** ຄຊກລ, ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ກະຊວງ ຮສສ.

- **ໄລຍະເວລາ: 2014 - 2020.**

**1.3. ວິເຄາະຂໍ້ມູນຜູ້ຖືກເຄາະຮ້າຍ ທັງປະລິມານ ແລະ ຄຸນນະພາບ.**

**- ກິດຈະກຳ.**

1.3.1. ປະຕິບັດນະໂຍບາຍ ແລະ ລະບຽບການໃນການວິເຄາະຂໍ້ມູນການເກີດອຸປະຕິເຫດ ລບຕ ໃຫ້ ຈະແຈ້ງ ແລະ ທັນຕາມເຫດການ.

1.3.2. ສ້າງຄວາມອາດສາມາດໃຫ້ບຸກຄະລາກອນ ຫ້ອງການ ຄຊກລ ໃນການນຳໃຊ້ລະບົບຖານຂໍ້ມູນໂດຍສະເພາະລະບົບການຄຸ້ມຄອງນຳໃຊ້ຂໍ້ມູນອົມສະມາ.

**- ຜູ້ຮັບຜິດຊອບ:** ຄຊກລ.

- **ໄລຍະເວລາ: 2014 – 2020.**

**1.4. ຮັບປະກັນສະໜອງຂໍ້ມູນຜູ້ຖືກເຄາະຮ້າຍໃຫ້ລັດຖະບານ, ອົງການບໍ່ສັງກັດລັດ, ປະເທດຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານຕ່າງໆ.**

**- ກິດຈະກຳ.**

1.4.1. ສ້າງໃຫ້ມີລະບົບເອົາຂໍ້ມູນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂຶ້ນເວັບໄຊຂອງ ຫ້ອງການ ຄຊກລ, ສະດວກໃຫ້ແກ່ບັນດາຄູ່ຮ່ວມງານໃນການເຂົ້າເຖິງ, ພ້ອມທັງເປັນຄວາມລັບ ແລະ ສ່ວນຕົນ.

1.4.2. ສະໜອງບົດລາຍງານປະຈຳເດືອນ, ໄຕມາດ, ຫົກເດືອນ ແລະ ປະຈຳປີໃຫ້ແກ່ລັດຖະບານ.

1.4.3. ປະກອບສ່ວນສ້າງບົດລາຍງານປະຈຳປີຂອງ ຄຊກລ ແລະ ບົດລາຍງານຕໍ່ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ.

1.4.4. ສະໜອງບົດລາຍງານໃຫ້ແກ່ກອງປະຊຸມວິຊາການ, ກອງປະຊຸມຂະແໜງການ ແລະ ກອງປະຊຸມໂຕະມົນ.

1.4.5. ປະຕິບັດນະໂຍບາຍ ແລະ ລະບຽບຫຼັກການ ໃນການຕອບສະໜອງຂໍ້ມູນຕາມການສະເໜີຂອງພາກສ່ວນຕ່າງໆໃຫ້ທັນກັບສະພາບການ.

- **ຜູ້ຮັບຜິດຊອບ:** ຄຊກລ.

- **ໄລຍະເວລາ: 2014 – 2020.**

**1.5. ຕິດຕາມຜູ້ລອດຊີວິດໂດຍຜ່ານຂະບວນການຟື້ນຟູຕ່າງໆ**

- **ກິດຈະກໍາ.**

1.5.1. ສໍາເລັດ ການຕິດຕາມຜູ້ລອດຊີວິດຈາກຂໍ້ມູນທີ່ສໍາຫຼວດໄດ້ໃນໄລຍະ 1 ແລະ ໄລຍະ 2, ກໍານົດຄວາມຕ້ອງການຂອງຜູ້ລອດຊີວິດໃຫ້ສໍາເລັດໃນປີ 2014.

1.5.2. ແຈກຢາຍຂໍ້ມູນຜູ້ລອດຊີວິດ ທີ່ໄດ້ສໍາຫຼວດ ແລະ ວິເຄາະແລ້ວ ໃຫ້ແກ່ບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ.

1.5.3. ເລີ່ມປະຕິບັດການຕິດຕາມຜູ້ລອດຊີວິດຈາກອຸປະຕິເຫດທີ່ເກີດຂຶ້ນໃນປີ 2013 ທຸກຄົນ.

1.5.4. ຝຶກອົບຮົມຜູ້ປະສານງານຂັ້ນເມືອງ ແລະ ແຂວງ ເພື່ອສືບຕໍ່ຕິດຕາມ ແລະ ລາຍງານກ່ຽວກັບຜູ້ຖືກເຄາະຮ້າຍ.

1.5.5. ວິເຄາະຂໍ້ມູນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບການຊ່ວຍເຫຼືອແລ້ວ ແລະ ການຊ່ວຍເຫຼືອອັນໃດທີ່ຜູ້ຖືກເຄາະຮ້າຍ ຍັງຕ້ອງການ.

1.5.6. ປຶກສາ ກ່ຽວກັບຂໍ້ມູນຂ່າວສານຜູ້ຖືກເຄາະຮ້າຍຢູ່ໃນກອງປະຊຸມກຸ່ມວິຊາການ ເພື່ອຮັບປະກັນການປະສານງານ ແລະ ການຕິດຕາມກວດກາໄດ້ຖືກຈັດຕັ້ງປະຕິບັດຕາມແຜນ ແລະມີການປະເມີນຜົນ.

1.5.7. ປະສານງານກ່ຽວກັບການເກັບກໍາຂໍ້ມູນກັບບັນດາອົງການຕ່າງໆ ທີ່ປະຕິບັດການເກັບກໍາຂໍ້ມູນ ເພື່ອຫຼີກລ້ຽງບໍ່ໃຫ້ມີການເກັບກໍາຂໍ້ມູນ ແລະ ການຊ່ວຍເຫຼືອສະໜັບສະໜູນຊໍ້າ.

- **ຜູ້ຮັບຜິດຊອບ:** ຄຊກລ.

**-ໄລຍະເວລາ: 2014-2020.**

2. **ການປິ່ນປົວການແພດ: ເພີ່ມທະວີໃຫ້ຜູ້ຖືກເຄາະຮ້າຍສາມາດ ເຂົ້າເຖິງການປິ່ນປົວດ້ານການແພດໂດຍເທົ່າທຽມກັນ** (ສົນທິສັນຍາວ່າດ້ວຍການເກືອດຫ້າມການນໍາໃຊ້ລະເບີດລູກຫວ່ານມາດຕາ5 ວັກ 1 ແລະ 2; ມາດຕາ 7 ວັກ 1 ມ; ແຜນປະຕິບັດງານວຽງຈັນ ຂໍ້ 25 ແລະ 28).

**2.1. ເພີ່ມທະວີການຮ່ວມມືກັບກະຊວງສາທາລະນະສຸກເພື່ອເອົາການຊ່ວຍເຫຼືອຂອງຜູ້ຖືກເຄາະຮ້າຍ ແລະ ຄົນພິການເຂົ້າເປັນນະໂຍບາຍ, ແຜນຍຸດທະສາດ ແລະ ແຜນປະຕິບັດງານ**

- **ກິດຈະກໍາ.**

2.1.1. ເຂົ້າຮ່ວມກອງປະຊຸມກຸ່ມວິຊາການຂະແໜງການສາທາລະນະສຸກ (ປະທານຮ່ວມໂດຍກະຊວງສາທາລະນະສຸກ, ອົງການອານາໄມໂລກ ແລະ ລັດຖະບານຍີ່ປຸ່ນ).

2.1.2. ຊຸກຍູ້ກະຊວງສາທາລະນະສຸກ ໃຫ້ສືບຕໍ່ເຂົ້າຮ່ວມກອງປະຊຸມກຸ່ມວິຊາການກ່ຽວກັບວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

2.1.3. ຈັດກອງປະຊຸມສໍາມະນາກັບກະຊວງສາທາລະນາສຸກ ທັງຂັ້ນສູນກາງ ເຖິງທ້ອງຖິ່ນເພື່ອເຜີຍແຜ່ ແລະ ປຶກສາຫາລືການປິ່ນປົວການແພດ ແລະ ການເຂົ້າເຖິງການບໍລິການຕ່າງໆສໍາລັບຜູ້ຖືກເຄາະຮ້າຍ ແລະ ຄົນພິການ ຢູ່ເຂດຫ່າງໄກຊອກຫຼີກ.

2.1.4. ອໍານວຍຄວາມສະດວກ ແລະ ສົ່ງເສີມບັນດາຜູ້ໃຫ້ທຶນ ເພື່ອສືບຕໍ່ຊ່ວຍເຫຼືອ ກະຊວງສາທາລະນະສຸກ ແລະ ບັນດາອົງການທີ່ໃຫ້ການບໍລິການໃນຂະແໜງສາທາລະນະສຸກ.

- **ຜູ້ຮັບຜິດຊອບ:** ຄຊກລ.
- **ໄລຍະເວລາ: 2015 – 2020.**

**2.2. ເພີ່ມທະວີໃຫ້ຜູ້ຖືກເຄາະຮ້າຍ ສາມາດເຂົ້າເຖິງການບໍລິການດ້ານການແພດຢູ່ຂັ້ນເມືອງ ແລະ ແຂວງ.**

- **ກິດຈະກໍາ.**

2.2.1. ຊຸກຍູ້ ເພື່ອໃຫ້ຈັດສັນ ຊັບພະຍາກອນຄົນ, ງົບປະມານ ແລະ ສິ່ງອໍານວຍຄວາມສະດວກດ້ານການແພດ ໃຫ້ແກ່ໂຮງໝໍຂັ້ນເມືອງ ແລະ ແຂວງ.

- **ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ອົງການຈັດຕັ້ງທາງສັງຄົມ.
- **ໄລຍະເວລາ: 2014-2020.**

2.3. **ເພີ່ມທະວີຄວາມພ້ອມລະດັບສູງສໍາລັບການປິ່ນປົວບາດແຜ ເພື່ອຮອງຮັບປິ່ນປົວບາດແຜໃຫ້ແກ່ຜູ້ທີ່ລອດຊີວິດຈາກອຸປະຕິເຫດ ລບຕ ແລະ ຜູ້ບາດເຈັບ ຈາກສາຍເຫດອື່ນໆ.**

- **ກິດຈະກໍາ.**

2.3.1. ວິເຄາະສິ່ງອໍານວຍຄວາມສະດວກຂອງຂະແໜງສາທາລະນະສຸກໃນປະຈຸບັນ (ສຸກສາລາ, ໂຮງໝໍເມືອງ ແລະ ແຂວງ) ໃນການຕອບສະໜອງການປິ່ນປົວບາດແຜໃຫ້ແກ່ບັນດາຜູ້ລອດຊີວິດຈາກອຸປະຕິເຫດ ລບຕ.

2.3.2. ຊຸກຍູ້ໃຫ້ມີມາດຕະຖານການຕອບສະໜອງບໍລິການປິ່ນປົວບາດແຜ ທີ່ໄດ້ມາດຕະຖານຢູ່ ສປປ ລາວ.

- **ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

- **ໄລຍະເວລາ: 2014– 2020.**

**2.4. ສົ່ງເສີມໃຫ້ເພີ່ມຊັບພະຍາກອນ ແລະ ສ້າງຄວາມສາມາດໃຫ້ແກ່ພະນັກງານຂະແໜງການສາທາລະນະສຸກ (ແພດປະຖົມພະຍາບານ, ຊ່ຽວຊານປົ່ນປົວແຜ ແລະ ຜ່າຕັດ, ທ່ານໝໍ ແລະ ພະຍາບານ)**

**- ກິດຈະກຳ.**

2.4.1. ສະໜັບສະໜູນ ແຜນຍຸດທະສາດພັດທະນາບຸກຄະລາກອນຂອງຂະແໜງສາທາລະນະສຸກ.

2.4.2. ເອົາໃຈໃສ່ເພີ່ມທະວີຄວາມພ້ອມບໍລິການ ແລະ ຝຶກອົບຮົມການປົວບາດແຜໃຫ້ແກ່ບຸກຄະລາກອນດ້ານການແພດ.

2.4.3. ສົ່ງເສີມວຽກງານທີ່ບັນດາອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະ ບັນດາອົງການຈັດຕັ້ງສາກົນທີ່ກຳລັງປະຕິບັດການສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນດ້ານການແພດ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະປະຕິບັດ: 2014 – 2020.**

**2.5. ປຸກລະດົມ ເພື່ອເພີ່ມທະວີໃຫ້ບໍລິການດ້ານການແພດໃຫ້ແກ່ຜູ້ຖືກເຄາະຮ້າຍຈາກລບຕ ຢູ່ຂັ້ນຊຸມຊົນ.**

**- ກິດຈະກຳ.**

2.5.1. ຄັດເລືອກເອົາຄູ່ມື ການຝຶກອົບຮົມການປະຖົມພະຍາບານທີ່ໄດ້ມາດຕະຖານ ເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມຢູ່ໃນຂະແໜງສາທາລະນະສຸກ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 - 2020.**

2.6. **ປຸກລະດົມໃຫ້ສ້າງລະບົບນຳສົ່ງຄົນເຈັບທີ່ຖືກເຄາະຮ້າຍ ເພື່ອໃຫ້ສາມາດເຂົ້າເຖິງການບໍລິການແພດ ແລະ ການຟື້ນຟູໜ້າທີ່ການທັນຕາມເວລາ.**

**- ກິດຈະກຳ.**

2.6.1. ຊຸກຍູ້ໃຫ້ກະຊວງສາທາລະນະສຸກ ກຳນົດຈຸດປະສານງານໃນການນຳສົ່ງຄົນເຈັບຢູ່ແຕ່ລະເມືອງ ແລະບ້ານ.

2.6.2. ຊຸກຍູ້ໃຫ້ເພີ່ມການຕອບສະໜອງດ້ານຊັບພະຍາກອນລະບົບການນຳສົ່ງຄົນເຈັບ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014-2020.**

**2.7. ຮັບປະກັນໃຫ້ມີກົນໄກຂອງຮັບການຈ່າຍຄ່າປິ່ນປົວການແພດໃຫ້ຜູ້ຖືກເຄາະຮ້າຍທີ່ມີປະສິດທິພາບ ເຊັ່ນ ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ແນໃສ່ໃນອານາຄົດໃຫ້ມີການປະກັນສຸຂະພາບສຳລັບຜູ້ຖືກເຄາະຮ້າຍລະດັບສາກົນ.**

**- ກິດຈະກຳ.**

2.7.1. ຊຸກຍູ້ໃຫ້ມີການຂະຫຍາຍກອງທຶນປິ່ນປົວຜູ້ຖືກເຄາະຮ້າຍ ກວມບັນດາເມືອງຕ່າງໆອີກ ແລະ ຮັບປະກັນໃຫ້ມີງົບປະມານເຄື່ອນໄຫວຢ່າງພຽງພໍ.

2.7.2. ເຊື່ອມສານເຂົ້າກັບກອງທຶນປະກັນສຸຂະພາບແຫ່ງຊາດ, ປັບປຸງພາລະບົດບາດ ເພື່ອກວມເອົາຄ່າປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.

2.7.3. ປຶກສາຫາລືເພື່ອເຊື່ອມສານກອງທຶນປະກັນສຸຂະພາບທົ່ວໄປ ແລະ ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍ ເພື່ອຮັບປະກັນສະໜອງມູນຄ່າການປິ່ນປົວຜູ້ຖືກເຄາະຮ້າຍ.

**- ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ.

**- ໄລຍະເວລາ: 2014 - 2020.**

**3. ຟື້ນຟູດ້ານໜ້າທີ່ການ: ເພີ່ມການເຂົ້າເຖິງການບໍລິການຟື້ນຟູໜ້າທີ່ການໃຫ້ຜູ້ຖືກເຄາະຮ້າຍຢ່າງເທົ່າທຽມ(ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານມາດຕາ5 ວັກ 1 ແລະ 2 ດ; ມາດຕາ 6 ວັກ 7 ຂໍ້ 1 ຕ; ແຜນປະຕິບັດງານວຽງຈັນ ຂໍ້ 25 ແລະ 28).**

**3.1. ເພີ່ມການຟື້ນຟູໜ້າທີ່ການເຂົ້າໃນນະໂຍບາຍແລະ ແຜນຍຸດທະສາດຂອງຂະແໜງສາທາລະນະສຸກ**

**- ກິດຈະກຳ.**

3.1.1. ເຂົ້າຮ່ວມກອງປະຊຸມກຸ່ມວິຊາການ ແລະ ກອງປະຊຸມຂະແໜງການສາທາລະນະສຸກ.

3.1.2. ຊຸກຍູ້ໃຫ້ກະຊວງສາທາລະນະສຸກ ສືບຕໍ່ເຂົ້າຮ່ວມກອງປະຊຸມກຸ່ມວິຊາການວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

**- ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ.

**- ໄລຍະເວລາ: 2014 -2020.**

**3.2. ປັບປຸງການປະສານງານຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງສາກົນທີ່ປະຕິບັດໜ້າທີ່ບໍລິການຟື້ນຟູໜ້າທີ່ການ**

**- ກິດຈະກຳ.**

3.2.1. ສະໜັບສະໜູນ ແລະ ສົ່ງເສີມເພື່ອເພີ່ມການປະສານງານໃນການບໍລິການຟື້ນຟູໜ້າທີ່ການ ໂດຍຜ່ານກອງປະຊຸມກຸ່ມວິຊາການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຜ່ານກົນໄກປະສານງານຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 - 2020.**

**3.3. ເພີ່ມການບໍລິການຟື້ນຟູໜ້າທີ່ການຢູ່ຂັ້ນເມືອງ ແລະ ຂັ້ນແຂວງ.**

**- ກິດຈະກໍາ.**

3.3.1. ຊຸກຍູ້ໃຫ້ມີການຂະຫຍາຍບັນດາສູນຟື້ນຟູນໜ້າທີ່ການ ໄປແຂວງທີ່ຍັງບໍ່ທັນມີ.

3.3.2. ສົ່ງເສີມໃຫ້ມີການຂະຫຍາຍການຕອບສະໜອງໂຄສະນາ ການບໍລິການເພີ່ມຂຶ້ນຕື່ມ.

**- ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 201-2020.**

**3.4. ສົ່ງເສີມໃຫ້ເພີ່ມຈໍານວນບຸກຄະລາກອນ ແລະ ສ້າງຄວາມສາມາດໃຫ້ແກ່ບຸກຄະລາກອນ ທີ່ປະຕິບັດວຽກງານຟື້ນຟູໜ້າທີ່ການ**

**- ກິດຈະກໍາ.**

3.4.1. ສົ່ງເສີມຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ການພັດທະນາບຸກຄະລາກອນ ຂອງຂະແໜງສາທາລະນະສຸກ.

3.4.2. ປຸກລະດົມພັດທະນາຄູ່ມືການຟື້ນຟູໜ້າທີ່ການ ໃຫ້ໄດ້ຕາມມາດຕະຖານສາກົນ.

3.4.3. ປຸກລະດົມໃຫ້ສົ່ງເສີມບັນດາອົງການທີ່ກໍາລັງປະຕິບັດວຽກງານ ເພື່ອຍົກລະດັບວິຊາການດ້ານການຟື້ນຟູໜ້າທີ່ການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາອົງການທາງສັງຄົມ.

**- ໄລຍະເວລາ: 2017-2020.**

**3.5. ສ້າງນະໂຍບາຍຍົກເວັ້ນຄ່າບໍລິການຟື້ນຟູໜ້າທີ່ການ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ.**

**- ກິດຈະກຳ.**

3.5.1. ເຊື່ອມສານເຂົ້າກັບພາກສ່ວນປະກັນສຸຂະພາບໂດຽປັບປຸງພາລະບິດບາດ, ລະບຸນະໂຍບາຍຄ່າໃຊ້ຈ່າຍການຟື້ນຟູໜ້າທີ່ການໃຫ້ແກ່ຜູ້ລອດຊີວິດຈາກ ລບຕ.

3.5.2. ປຶກສາຫາລື ເພື່ອເຊື່ອມສານເຂົ້າກັນລະຫວ່າງກອງທຶນປະກັນສຸຂະພາບທົ່ວໜ້າ ກັບກອງທຶນປິ່ນ ປົວຜູ້ລອດຊີວິດ ເພື່ອຮັບປະກັນໃຫ້ສາມາດຕອບສະໜອງຕາມມູນຄ່າໃຊ້ຈ່າຍການປິ່ນປົວໃຫ້ແກ່ຜູ້ຖືກເຄາະຮ້າຍ.

**- ຜູ້ຮັບຜິດຊອບ:** ຄຊກລ.

**- ໄລຍະເວລາ: 2017 - 2020.**

**3.6. ເພີ່ມການບໍລິການຟື້ນຟູໜ້າທີ່ການ**ໃຫ້**ຜູ້ຖືກເຄາະຮ້າຍ ແລະ ຄົນພິການ**ໃຫ້ຫຼ ຍຂຶ້ນ.

**- ກິດຈະກຳ.**

3.6.1. ປຸກລະດົມໃຫ້ສ້າງຕັ້ງໜ່ວຍງານໂຄສະນາຊຸມຊົນ ເພື່ອໃຫ້**ຜູ້ຖືກເຄາະຮ້າຍ ແລະ ຄົນພິການ**ເຂົ້າໃຈເຖິງປະໂຫຍດຈາກການຟື້ນຟູໜ້າທີ່ການ.

3.6.2. ດຳເນີນການສຶກສາ ເພື່ອໃຫ້ຮູ້ສາຍເຫດຜູ້ຖືກເຄາະຮ້າຍ ແລະ ຄົນພິການບໍ່ສາມາດເຂົ້າເຖິງການບໍລິການຟື້ນຟູໜ້າທີ່ການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາອົງການທາງສັງຄົມ.

**- ໄລຍະເວລາ: 2014 - 2020**

**3.7. ລະບົບການນຳສົ່ງ ແລະ ການເຂົ້າເຖິງ ສຳລັຜູ້ຖືກເຄາະຮ້າຍ ທີ່ຕ້ອງການປິ່ນປົວ ແລະ ການຟື້ນຟູດ້ານໜ້າທີ່ການຢູ່ທົ່ວ ສປປ ລາວ ໄດ້ຮັບການພັດທະນາ.**

**- ກິດຈະກຳ.**

3.7.1. ສະເໜີກະຊວງສາທາລະນະສຸກກຳນົດຈຸດປະສານງານສຳລັບການນຳສົ່ງຜູ້ຖືກເຄາະຮ້າຍ ແຕ່ລະບ້ານ ແລະ ເມືອງ.

3.7.2. ປຸກລະດົມໃຫ້ເພີ່ມຊັບພະຍາກອນໃຫ້ແກ່ລະບົບການນຳສົ່ງຄົນເຈັບ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 - 2020.**

**4. ສະໜັບສະໜູນດ້ານຈິດຕະສາດ ແລະ ການມີສ່ວນຮ່ວມຢູ່ໃນສັງຄົມ**

**ເພີ່ມຄວາມຮູ້ຄວາມເຂົ້າໃຈ ແລະ ສະໜັບສະໜູນຕາມຄວາມຕ້ອງການດ້ານຈິດຕະສາດ ແລະ ການມີສ່ວນຮ່ວມຢູ່ໃນສັງຄົມໃຫ້ແກ່ຜູ້ຖືກເຄາະຮ້າຍ** (ມາດຕາ 5 ວັກ 1 ແລະ 2 ຍ; ມາດຕາ 6 ວັກ 7; ແລະ ມາດຕາ 7 ວັກ 1 ຖ: ແຜນປະຕິບັດງານວຽງຈັນ ຂໍ້ 25 ແລະ 28).

**4.1. ປັບປຸງການປະສານງານລະຫວ່າງ ຄຊກລ** ກັບ**ບັນດາກະຊວງ, ອົງການທຽບເທົ່າ, ອົງການ ສປຊ ແລະ ບັນດາອົງການຈັດຕັ້ງສາກົນ ທີ່ເຮັດວຽກກ່ຽວກັບສຸຂະພາບຈິດ ເພື່ອຮັບປະກັນໃຫ້ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍໄດ້ຮັບການບັນຈຸເຂົ້າໃນນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການລະດັບຊາດ.**

**- ກິດຈະກໍາ.**

4.1.1. ພັດທະນາໃຫ້ມີການປະສານທີ່ດີກັບກຸ່ມວິຊາການທີ່ສ້າງແຜນຍຸດທະສາດ ແລະ ແຜນການດ້ານສຸຂະພາບຈິດ.

4.1.2. ພັດທະນາໃຫ້ມີການປະສານງານທີ່ດີກັບກົມບໍາບັດສຸຂະພາບຈິດ, ກະຊວງສາທາລະນະສຸກ.

4.1.3. ເຊື່ອມໂຍງນະໂຍບາຍຊ່ວຍເຫຼືອຜູ້ຖືກເຄາະຮ້າຍເຂົ້າກັບຍຸດທະສາດ ແລະ ແຜນການປິ່ນປົວສຸຂະພາບຈິດຂອງກະຊວງສາທາລະນະສຸກ *(ຍຸດທະສາດຍັງບໍ່ທັນໄດ້ຮັບຮອງ).*

**- ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 -2020**

**4.2. ເພີ່ມລະດັບການສະໜັບສະໜູນດ້ານສຸຂະພາບຈິດໃຫ້ແກ່ຜູ້ຖືກເຄາະຮ້າຍ**

**- ກິດຈະກໍາ.**

4.2.1. ປຸກລະດົມໃຫ້ມີຄວາມເອກະພາບ/ມີມາດຕະຖານໃນການປະເມີນດ້ານສຸຂະພາບຈິດ ຂອງຜູ້ຖືກເຄາະຮ້າຍພາຍຫຼັງປິ່ນປົວຢູ່ໂຮງໝໍ.

4.2.2. ປຸກລະດົມໃຫ້ມີການຝຶກອົບຮົມພະນັກງານ ເພື່ອຮັບປະກັນການປິ່ນປົວສຸຂະພາບຈິດຢ່າງມີປະສິດທິພາບ.

4.2.3. ປຸກລະດົມໃຫ້ມີຮູບແບບເພື່ອນສອນເພື່ອນໃຫ້ແກ່ອໍານາດການປົກຄອງທີ່ກ່ຽວຂ້ອງ, ອົງການຈັດຕັ້ງບໍ່ສັງກັດລັດ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍພາຍຫຼັງອອກຈາກໂຮງໝໍ.

4.2.4. ປຸກລະດົມໃຫ້ມີການສະໜັບສະໜູນການປິ່ນປົວຈິດໃຈໃຫ້ແກ່ຄອບຄົວຜູ້ໄດ້ຮັບເຄາະຮ້າຍ , ຖ້າຕ້ອງການ.

**- ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 - 2020.**

**4.3. ເພີ່ມຈຳນວນບຸກຄະລາກອນຊ່ຽວຊານດ້ານສຸຂະພາບຈິດ**

**- ກິດຈະກຳ.**

4.3.1. ປະສານງານທີ່ດີກັບກຸ່ມວິຊາການດ້ານການວາງແຜນຍຸດທະສາດ ແລະ ແຜນການດ້ານສຸຂະພາບຈິດ ເພື່ອສົ່ງເສີມໃຫ້ເອົາວຽກການຊ່ວຍເຫຼືອຜູ້ເຄາະຮ້າຍເຂົ້າໃນວຽກງານຂອງເຂົາເຈົ້າ.

- **ຜູ້ຮັບຜິດຊອບ:** ຄຊກລ ຮ່ວມກັບກະຊວງສາທາລະນະສຸກ.

**- ໄລຍະເວລາ: 2014 - 2020.**

**4.4. ເຊື່ອມໂຍງການບໍລິການປິ່ນປົວສຸຂະພາບຈິດເຂົ້າກັບວຽກງານການບໍລິການປິ່ນປົວທົ່ວໄປ**

**- ກິດຈະກຳ.**

4.4.1. ປຸກລະດົມໃຫ້ມີການຝຶກອົບຮົມດ້ານສຸຂະພາບຈິດໃຫ້ພະນັກງານ ດ້ວຍຄູ່ມືການຝຶກອົບຮົມທີ່ມີລະດັບມາດຕະຖານສາກົນ.

4.4.2. ປຸກລະດົມໃຫ້ມີການຝຶກອົບຮົມດ້ານສຸຂະພາບຈິດໃຫ້ອາສາສະໝັກບ້ານ ດ້ວຍຄູ່ມືການຝຶກອົບຮົມການປະຖົມພະຍາບານ ທີ່ມີມາດຕະຖານສູງ.

4.4.3. ປຸກລະດົມໃຫ້ທຸກສະຖານທີ່ເຮັດວຽກຂອງຂະແໜງການສາທາລະນະສຸກ ພິຈາລະນາຝຶກສ້ອມວຽກງານດ້ານສຸຂະພາບຈິດໃນແຕ່ລະວັນ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ.

**- ໄລຍະເວລາ: 2015 -2020.**

**4.5. ປຸກລະດົມໃຫ້ເພີ່ມການໂຄສະນາປຸກຈິດສຳນຶກກ່ຽວກັບວຽກງານສຸຂະພາບຈິດແລະ ການປິ່ນປົວ.**

**- ກິດຈະກຳ.**

4.5.1. ສົ່ງເສີມໃຫ້ມີໂຄງການສຶກສາດ້ານສຸຂະພາບຈິດໃຫ້ແກ່ຊຸມຊົນຢູ່ທົ່ວ ສປປ ລາວ.

4.5.2. ສົ່ງເສີມກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາຮ່ວມກັນສ້າງຄູ່ມືກ່ຽວກັບວິຊາການສົ່ງເສີມສຸຂະພາບສໍາລັບຊັ້ນປະຖົມສຶກສາ ແລະ ມັດທະຍົມສຶກສາ.

4.5.3. ສົ່ງເສີມໃຫ້ສ້າງບຸກຄະລາກອນດ້ານສຸຂະພາບຈິດ ແລະ ຜູ້ອາວຸໂສຢູ່ໃນຊຸມຊົນເປັນຜູ້ຕອບສະໜອງສະໜັບສະໜູນວຽກງານສຸຂະພາບຈິດ ແລະ ສະໜັບສະໜູນຝຶກອົບຮົມໃຫ້ແກ່ຊຸມຊົນ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ ແລະ ບັນດາອົງການທາງສັງຄົມ.

**- ໄລຍະເວລາ: 2014-2020.**

**4.6. ສ້າງໂອກາດໃຫ້ຜູ້ຖືກເຄາະຮ້າຍ ແລະ ຄົນພິການມີສ່ວນຮ່ວມຕໍ່ກິດຈະກໍາຢູ່ຄອບຄົວ ຊຸມຊົນ, ສັງຄົມ, ວຽກງານກິລາ ແລະ ກິດຈະກໍາອື່ນໆ ລວມທັງວຽກງານການເມືອງ.**

**- ກິດຈະກໍາ.**

4.6.1. ສະເໜີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂຄສະນາໃຫ້ມີການຈັດຕັ້ງໂຄງການກ່ຽວກັບສິດທິ ແລະ ການສ້າງຄວາມອາດສາມາດໃຫ້ຜູ້ຖືກເຄາະຮ້າຍ ແລະ ຄົນພິການ.

4.6.2. ປຸກລະດົມໃຫ້ເພີ່ມໂຄງການກິລາ ເພື່ອຜູ້ຖືກເຄາະຮ້າຍ ແລະ ຄົນພິການ.

4.6.3. ສະເໜີກະຊວງ ແລະ ອົງການຈັດຕັ້ງຕ່າງໆ ປັບປຸງທາງເຂົ້າສໍານັກງານຂອງຕົນ ແລະ ສະຖານທີ່ສາທາລະນະຕ່າງໆສໍາລັບຄົນພິການ.

4.6.4. ປຸກລະດົມໃຫ້ເພີ່ມວຽກງານດ້ານວິຊາອາຊີບຕ່າງໆໃຫ້ແກ່ຜູ້ຖືກເຄາະຮ້າຍແລະຄົນພິການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງໂຍທາທິການແລະຂົນສົ່ງ, ກະຊວງສຶກສາທິການ ແລະ ກິລາ.

**- ໄລຍະເວລາ: 2014 - 2020.**

**5. ການຟື້ນຟູດ້ານເສດຖະກິດ ແລະ ການສຶກສາ: ເພີ່ມການເຂົ້າເຖິງການສຶກສາແລະ ການຈ້າງງານ ໃຫ້ແກ່ຜູ້ຖືກເຄາະຮ້າຍ** (ມາດຕາ 5 ວັກ 1 ແລະ 2 ຍ; ມາດຕາ 6 ວັກ 7; ແລະມາດຕາ 7 ວັກ 1 ຖ: ແຜນປະຕິບັດງານວຽງຈັນຂໍ້ 23, 25 ແລະ 28).

**5.1. ສະໜັບສະໜູນຄະນະກໍາມະການແຫ່ງຊາດເພື່ອຄົນພິການຮ່ວມກັບບັນດາກະຊວງທີ່ກ່ຽວຂ້ອງພັດທະນາທິດທາງ, ນະໂຍບາຍ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງກັບສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ໂດຍສະເພາະແມ່ນມາດຕາ 24 - ກ່ຽວກັບການສຶກສາຮຽນຮ່ວມ ສໍາລັບຄົນພິການ ແລະ ມາດຕາ 27 - ສິດສະເໝີພາບໃນການເຮັດວຽກສໍາລັບຄົນພິການ**

**- ກິດຈະກຳ.**

5.1.1. ສະເໜີລັດຖະບານຮັບຮອງດຳລັດວ່າດ້ວຍສິດທິຂອງຄົນພິການ.

5.1.2. ອຳນວຍຄວາມສະດວກໃນການສ້າງໂອກາດ ເພື່ອສ້າງຄວາມສາມາດໃຫ້ແກ່ຄະນະກຳມະການແຫ່ງຊາດເພື່ອຄົນພິການ.

5.1.3. ແບ່ງປັນຂໍ້ມູນກ່ຽວກັບການຕິດຕາມຜູ້ລອດຊີວິດຈາກ ລບຕ ເພື່ອຊ່ວຍຄະນະກຳມະການແຫ່ງຊາດເພື່ອຄົນພິການ ກຳນົດຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍທີ່ລອດຊີວິດຈາກອຸປະຕິເຫດ ລບຕ ໃນການຈ້າງງານ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**-ໄລຍະເວລາ: 2014 -2020.**

**5.2. ຮັດແໜ້ນການຮ່ວມມືກັບກະຊວງສຶກສາທິການ ແລະ ກິລາ ເພື່ອຮັບປະກັນໃຫ້ຄວາມຕ້ອງການຂອງຜູ້ລອດຊີວິດ ແລະ ຄົນພິການໄດ້ຮັບການພັນຈຸເຂົ້າໃນນະໂຍບາຍ, ຍຸດທະສາດ ແລະ ແຜນການລະດັບຊາດ.**

**- ກິດຈະກຳ.**

5.2.1. ສະເໜີໃຫ້ກຸ່ມວິຊາການຂອງຂະແໜງການສຶກສາ ເຂົ້າຮ່ວມວຽກງານການຮຽນຮ່ວມ ແລະ ການຝຶກອົບຮົມວິຊາອາຊີບ.

5.2.2. ຊຸກຍູ້ກະຊວງສຶກສາທິການ ແລະ ກິລາ ສືບຕໍ່ເຂົ້າຮ່ວມກອງປະຊຸມກຸ່ມວິຊາການວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

5.2.3. ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຕິດຕາມຜູ້ລອດຊີວິດຈາກ ລບຕ ເພື່ອຊ່ວຍກະຊວງສຶກສາທິການ ແລະ ກິລາ ກຳນົດຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍທີ່ລອດຊີວິດຈາກອຸປະຕິເຫດ ລບຕ ໃນວຽກງານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ການຈ້າງງານ.

5.2.4. ຊຸກຍູ້ໃຫ້ກະຊວງສຶກສາທິການ ແລະ ກິລາ ຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດກ່ຽວກັບການສຶກສາຮຽນຮ່ວມ 2011-2015 ເພື່ອຕອບສະໜອງຄວາມຕ້ອງການສະເພາະ ຂອງບັນດາຜູ້ຖືກເຄາະຮາຍຈາກອຸປະຕິອຸເຫດ ລບຕ ແລະ ຄົນພິການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສຶກສາທິການ ແລະ ກິລາ.

**- ໄລຍະເວລາ: 2014 -2015.**

**5.3.ສະໜັບສະໜູນການຝຶກອົບຮົມທັກສະໃນການສ້າງລາຍຮັບຕາມທີ່ກຳນົດຢູ່ໃນແຜນແມ່ບົດຂອງກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການພັດທະນາວຽກງານອາຊີວະສຶກສາ ແລະ ການຝຶກອົບຮົມ 2008-2015.**

**- ກິດຈະກຳ.**

5.3.1. ຊຸກຍູ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກະຊວງສາທາລະນະສຸກ ພິຈາລະນາໃຫ້ມີຫຼັກສູດຝຶກອົບຮົມວິຊາຊີບຕ່າງໆທີ່ຕະຫຼາດມີຄວາມຕ້ອງການ ແລະ ດຳເນີນກິດຈະກຳດ້ວຍຕົນເອງເພື່ອສ້າງລາຍຮັບຢ່າງມີອິດສະຫຼະໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ຄົນພິການ.

5.3.2. ຊຸກຍູ້ໃຫ້ປັບປຸງແນວທາງການຝຶກອົບຮົມວິຊາຊີບ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ແລະ ຜູ້ພິການ ສາມາດດຳເນີນກິດຈະກຳການສ້າງລາຍຮັບ.

5.3.3. ໃຫ້ຜູ້ຖືກເຄາະຮ້າຍມີສ່ວນຮ່ວມໃນການປຶກສາຫາລື ແລະ ພັດທະນາລະບົບການສຶກສາ, ຫຼັກສູດ ແລະ ການບໍລິການຕ່າງໆ ສຳລັບຜູ້ຖືກເຄາະຮ້າຍ ແລະ ຄົນພິການ.

5.3.4. ສົ່ງເສີມການຝຶກອົບຮົມ ແລະ ການພັດທະນາດ້ານທັກສະຕ່າງໆໃຫ້ແກ່ຊຸມຊົນ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ,ກະຊວງສຶກສາທິການ ແລະ ກິລາ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014-2020.**

**5.4. ສົ່ງເສີມໃຫ້ມີການຍົກລະດັບການບໍລິການ ການຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ຄົນພິການອື່ນໆ.**

**- ກິດຈະກຳ.**

5.4.1. ນຳໃຊ້ຂໍ້ມູນຈາກການຕິດຕາມຜູ້ລອດຊີວິດ ຂອງຫ້ອງການ ຄຊກລ ເພື່ອກຳນົດຄວາມຕ້ອງການຂອງບັນດາຜູ້ຖືກເຄາະຮ້າຍ ກ່ຽວກັບການຝຶກອົບຮົມວິຊາຊີບຕ່າງໆລວມທັງທີ່ຢູ່ຂອງເຂົາເຈົ້າ.

5.4.2. ປະກອບສ່ວນຂໍ້ມູນດັ່ງກ່າວນີ້ໃຫ້ແກ່ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສາທາລະນະສຸກ.

5.4.3. ສົ່ງເສີມໃຫ້ມີການຈັດຕັ້ງປະຕິບັດເຜີຍແຜ່ໃຫ້ບັນດາຜູ້ຖືກເຄາະຮ້າຍ ແລະ ຄົນພິການມີຄວາມເຂົ້າໃຈຕໍ່ການບໍລິການ ການຝຶກອົບຮົມວິຊາຊີບຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 – 2020.**

**5.5. ສົ່ງເສີມໃຫ້ຜູ້ຖືກເຄາະຮ້າຍແລະ ຄົນພິການສາມາດເຂົ້າເຖິງການຈ້າງງານແລະ ການສ້າງລາຍຮັບດ້ວຍຕົນເອງ.**

**- ກິດຈະກຳ**

5.5.1. ສະໜັບສະໜູນໃຫ້ມີການປະສານງານຂອງພາກລັດ ແລະ ບັນດາອົງການທາງສັງຄົມກ່ຽວກັບການຈ້າງງານ ແລະ ການສ້າງລາຍຮັບດ້ວຍຕົນເອງ ຂອງຜູ້ຖືກເຄາະຮ້າຍ ແລະ ຜູ້ພິການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 - 2020.**

**5.6. ການເຂົ້າເຖິງສະຖາບັນການເງິນແລະ ການບໍລິການເງິນກູ້ສຳລັບຜູ້ຖືກເຄາະຮ້າຍແລະ ຄົນພິການອື່ນໆ.**

**- ກິດຈະກຳ.**

5.6.1. ສົມທົບກັບຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ພັດທະນາແຜນທີ່ບັນດາອົງການທີ່ຕອບສະໜອງການບໍລິການເງິນກູ້ໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ຄົນພິການອື່ນໆ.

- ຜູ້**ຮັບຜິດຊອບ:** ຄຊກລ, ກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**- ໄລຍະເວລາ: 2014-2020.**

**5.7. ສົ່ງເສີມການເຂົ້າໂຮງຮຽນສໍາລັຜູ້ຖືກເຄາະຮ້າຍ ທີ່ເປັນເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນຍ້ອນສາຍເຫດຈາກອຸປະຕິເຫດ ລບຕ.**

**- ກິດຈະກຳ.**

5.7.1. ສົ່ງເສີມການປັບປຸງຂະບວນການຈັດຫາແຫຼ່ງທຶນຈາກ ກະຊວງສຶກສາທິການ ແລະ ກິລາ, ອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນ ເພື່ອໃຫ້ຜູ້ຖືກເຄາະຮ້າຍ ທີ່ເປັນເດັກນ້ອຍໄດ້ຮຽນຢູ່ສະຖາບັນການສຶກສາຕ່າງໆ.

5.7.2. ໃຫ້ຜູ້ຖືກເຄາະຮ້າຍໄດ້ປຶກສາຫາລື ແລະ ພັດທະນາລະບົບການສຶກສາຮຽນຮ່ວມ, ຫຼັກສູດ ແລະ ການບໍລິການອື່ນໆໃຫ້ແກ່ເດັກນ້ອຍພິການ.

5.7.3. ຊຸກຍູ້ກະຊວງສາທາລະນະສຸກ ປັບປຸງແຫຼ່ງທຶນ ແລະ ຂະບວນການສະໜອງດ້ານສຸຂະພາບຈິດ ໃຫ້ແກ່ເດັກນ້ອຍພິການ, ລວມທັງຜູ້ທີ່ຖືກອຸປະຕິເຫດ ລບຕ.

5.7.4. ຊຸກຍູ້ກະຊວງສຶກສາທິການ ແລະ ກິລາ ຝຶກອົບຮົມສະເພາະຄູທີ່ເຮັດວຽກກັບເດັກນ້ອຍທີ່ປະສົບເຄາະຮ້າຍຈາກອຸປະຕິເຫດ ລບຕ ແລະ ເດັກນ້ອຍພິການອື່ນໆ.

**- ຜູ້ ຮັບຜິດຊອບ:** ຄຊກລ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014-2020.**

**6. ລະບຽບກົດໝາຍ ແລະ ນະໂຍບາຍ: ລະບຽບກົດໝາຍ ແລະ ນະໂຍບາຍຂອງ ສປປ ລາວຕ້ອງສະທ້ອນໃຫ້ເຫັນເຖິງສິດທິຂອງຜູ້ຖືກເຄາະຮ້າຍແລະ ຊຸມຊົນຂອງຄົນພິການ** (ມາດຕາ 5 ວັກ 1 ແລະ 2 ຂ; ແຜນປະຕິບັດງານວຽງຈັນຂໍ້ 26).

**6.1. ດຳລັດວ່າດ້ວຍສິດທິຄົນພິການຕ້ອງຖືກຮັບຮອງໂດຍໄວ ແລະ ຜົນບັງຄັບໃຊ້ຕາມກົດໝາຍ.**

**-ກິດຈະກຳ.**

6.1.1. ຊຸກຍູ້ໃຫ້ລັດຖະບານຮັບຮອງ ປະກາດໃຊ້ດຳລັດວ່າດ້ວຍສິດທິຂອງຄົນພິການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**- ໄລຍະເວລາ: 2014 – 2017.**

**6.2. ເພີ່ມທະວີການສະໜັບສະໜູນໃຫ້ຄະນະກຳມະການແຫ່ງຊາດເພື່ອຄົນພິການ ເພື່ອສ້າງຄວາມອາດສາມາດ ໃນ**ດ້ານ:

- ການສັງເກດການຕໍ່ການຕອບສະໜອງຕໍ່ບັນດາພັນທະຂອງສົນທິສັນຍາວ່າດ້ວຍສິດທິຄົນພິການ.
- ການປະສານງານພາຍໃນຂະແໜງການພິການ.
- ການສະໜັບສະໜູນ ແລະ ປຶກສາຫາລືຢ່າງເປັນປົກກະຕິກັບບັນດາອົງການທີ່ໃຫ້ການບໍລິການແກ່ຜູ້ຖືກເຄາະຮ້າຍ ແລະ ຄົນພິການ.
- ໂຄສະນາໃນນາມຕາງໜ້າອົງການ ແລະ ຜູ້ໃຫ້ບໍລິການສຳລັບຄົນພິການ ແລະ ຜູ້ຖືກເຄາະຮ້າຍທີ່ລອດຊີວິດຈາກອຸປະຕິເຫດ ລບຕ.

**- ກິດຈະກຳ.**

6.2.1. ສົ່ງເສີມ ແລະ ສະໜັບສະໜູນ ຄະນະກຳມະການແຫ່ງຊາດ ເພື່ອຄົນພິການເຂົ້າຮ່ວມກອງປະຊຸມກຸ່ມວິຊາການຂອງແຕ່ລະກະຊວງ ແລະ ຂະແໜງການອື່ນໆ.

6.2.2. ສົ່ງເສີມ ແລະ ສະໜັບສະໜູນຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ສ້າງຂະບວນການການເກັບກຳຂໍ້ມູນແຫ່ງຊາດກ່ຽວກັບຄົນພິການ.

6.2.3. ສົ່ງເສີມ ແລະ ສະໜັບສະໜູນ ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ສ້າງກົນໄກຂະບວນການການຕິດຕາມ ບັນດາຜູ້ໃຫ້ການບໍລິການແກ່ຜູ້ຖືກເຄາະຮ້າຍ ແລະ ຄົນພິການ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 -2020.**

**6.3. ບັນຈຸຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ ເຂົ້າໃນແຜນຍຸດທະສາດ ແລະ ແຜນການຂອງຂະແໜງການຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ.**

**-ກິດຈະກຳ.**

6.3.1. ເຂົ້າຮ່ວມກອງປະຊຸມກຸ່ມວິຊາການ ແລະ ກອງປະຊຸມຂະແໜງການຕ່າງໆ.

6.3.2. ປູກຈິດສຳນຶກກ່ຽວກັບຄວາມຕ້ອງການຂອງຜູ້ລອດຊີວິດຈາກອຸປະຕິເຫດ ລບຕ ໃຫ້ແກ່ເມືອງ ແລະ ແຂວງ, ບັນດາກອງປະຊຸມຢູ່ໃນລະດັບສູນກາງ ແລະ ກອງປະຊຸມກຸ່ມວິຊາການຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ.

**- ໄລຍະເວລາ: 2014 -2020.**

**6.4. ປຸກລະດົມໃຫ້ອົງການທີ່ຈັດຕັ້ງປະຕິບັດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຄົນພິການ ມີສ່ວນຮ່ວມໃນການພັດທະນາແຜນການ ແລະ ແຜນຍຸດທະສາດຕ່າງໆ.**

**- ກິດຈະກຳ.**

6.4.1. ຮ່ວມກັບກຸ່ມທີ່ເປັນຕົວແທນຂອງຜູ້ລອດຊີວິດຈາກ ລບຕ ທີ່ມີປະຈຸບັນເຊັ່ນ: ກຸ່ມຕໍ່ຕ້ານລະເບີດບໍ່ທັນແຕກຂອງອົງການສາກົນ ເພື່ອຄົນພິການ ແລະ ບັນດາອົງການທີ່ເຮັດວຽກກ່ຽວກັບຜູ້ພິການ ເພື່ອເຂົ້າຮ່ວມກອງປະຊຸມວິຊາການລະດັບຊາດ, ສາກົນ ແລະ ກອງປະຊຸມສົນທິສັນຍາຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 -2020.**

**6.5. ສົ່ງເສີມຮູບແບບການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍແລະ ຄົນພິການໃນການຈັດຕັ້ງປະຕິບັດການພັດທະນາແບບມີສ່ວນຮ່ວມຈາກຊຸມຊົນ(ໃນຜ່ານມາເອີ້ນວ່າ ການຟື້ນຟູແບບມີສ່ວນຮ່ວມຈາກຊຸມຊົນ).**

**- ກິດຈະກຳ.**

6.5.1. ຍົກເອົາກໍລະນີທີ່ມີຜົນສຳເລັດຈາກຮູບແບບການພັດທະນາແບບມີສ່ວນຮ່ວມຈາກຊຸມຊົນ ຢູ່ໃນລາວ ແລະ ສາກົນ ເພື່ອສົ່ງເສີມໃຫ້ສຶກສາບົດຮຽນດີທີ່ຫອດຖອນໄດ້.

6.5.2. ສົ່ງເສີມໃຫ້ມີແບບຢ່າງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ຄວນພິຈາລະນາ ຈັດຕັ້ງປະຕິບັດລະຫວ່າງກະຊວງຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014-2020.**

**7. ການປະສານງານ: ປັບປຸງການປະສານງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການເຊື່ອມສານກັບຂະແໜງພິການ** (ມາດຕາ 5 ວັກ 2 ຂ; ແຜນປະຕິບັດງານວຽງຈັນຂໍ້ 21, 23 ແລະ 56).

**7.1. ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະຕິບັດພັນທະສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານແລະ ສົນທິສັນຍາ ວ່າດ້ວຍສິດທິຂອງຄົນພິການ**

**- ກິດຈະກຳ**

7.1.1. ຊຸກຍູ້ບັນດາກະຊວງໃຫ້ມີຄຳໝັ້ນສັນຍາປະຕິບັດສົນທິສັນຍາວ່າດ້ວຍ ການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍຜ່ານກອງປະຊຸມວິຊາການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**- ໄລຍະເວລາ: 2014 -2020.**

**7.2. ບັນດາອົງການຈັດຕັ້ງທາງສັງຄົມ ຮ່ວມກັບລັດຖະບານອຳນວຍຄວາມສະດວກປະຕິບັດ ສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ ແລະ ສົນທິສັນຍາວ່າດ້ວຍສິດທິຄົນພິການ ເພື່ອຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການອື່ນໆ.**

**- ກິດຈະກຳ.**

7.2.1. ຮ່ວມກັບບັນດາສະມະຊິກກອງປະຊຸມວິຊາການ ເພື່ອປູກຈິດສຳນຶກໃຫ້ແກ່ອົງການຈັດຕັ້ງທາງສັງຄົມກ່ຽວກັບສົນທິສັນຍາວ່າດ້ວຍການເກືອດຫ້າມການນຳໃຊ້ລະເບີດລູກຫວ່ານ, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

**- ຜູ້ຮັບຜິດຊອບ:** ຄຊກລ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014-2020.**

**7.3. ເຊື່ອມໂຍງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍເຂົ້າກັບບັນດາແຜນປະຕິບັດງານລະດັບຊາດກ່ຽວກັບຜູ້ພິການ ແລະ ການພັດທະນາ.**

**- ກິດຈະກຳ**

7.3.1. ເຊື່ອມໂຍງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເຂົ້າແຜນຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ.

**- ຜູ້ຮັບຜິດຊອບ:** ຄຊກລ.

**- ໄລຍະເວລາ: 2014 -2020.**

**7.4. ປະສານງານ ເພື່ອປຸກລະດົມທຶນຮອມກັບທຸກອົງການຈັດຕັ້ງພາກລັດ ແລະ ສັງຄົມ.**

**-ກິດຈະກຳ.**

7.4.1. ສ້າງຄວາມຮູ້ ແລະ ຄວາມສາມາດໃຫ້ແກ່ບັນດາອົງການທີ່ຕອບສະໜອງການບໍລິການໃນການຊອກໂອກາດການສະເໜີຂໍທຶນ ແລະ ຄວາມຕ້ອງການອື່ນໆກັບບັນດາຜູ້ໃຫ້ທຶນ.

7.4.2. ສົ່ງເສີມບັນດາອົງການທີ່ເຮັດວຽກການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຄົນພິການ ເພື່ອລາຍງານກິດຈະກຳທີ່ບັນດາອົງການໄດ້ຈັດຕັ້ງປະຕິບັດ ແລະ ບັນຫາຕ່າງໆ ໂດຍຜ່ານກອງປະຊຸມວິຊາການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ.

7.4.3. ສົ່ງເສີມໃຫ້ເພີ່ມບຸກຄະລາກອນ ແລະ ດ້ານການເງິນ ເພື່ອໂຄສະນາບັນຫາສິດທິ ແລະ ຄວາມຕ້ອງການຂອງບັນດາຜູ້ລອດຊີວິດຈາກອຸປະຕິເຫດ ລບຕ.

**- ຜູ້ຮັບຜິດຊອບ:** ຄຊກລ.

**-ໄລຍະເວລາ: 2014 - 2020.**

**7.5. ປັບປຸງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໃຫ້ເຂົ້າກັບແຜນຍຸດທະສາດຂອງຂະແໜງການອື່ນໆ.**

**-ກິດຈະກຳ.**

7.5.1. ເຮັດວຽກຮ່ວມກັບບັນດາກະຊວງ ແລະ ບັນດາອົງການທາງສັງຄົມ ເພື່ອພັດທະນາແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ໂດຍແບ່ງຄວາມຮັບຜິດຊອບໃຫ້ແກ່ບັນດາກະຊວງທີ່ກ່ຽວຂ້ອງ ເພື່ອປະກອບສ່ວນກ່ຽວກັບຄວາມຮັບຜິດຊອບ ແລະ ບັນດາຂໍ້ສະເໜີແນະຕ່າງໆ.

**- ຜູ້ຮັບຜິດຊອບ:** ຄຊກລ, ກະຊວງຕ່າງໆທີ່ກ່ຽວຂ້ອງ ແລະ ບັນດາອົງການຈັດຕັ້ງທາງສັງຄົມ.

**- ໄລຍະເວລາ: 2014 – 2020.**

## ພາກ IV. ກົນໄກການຂົນຂວາຍລະດົມທຶນ.

ແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສະບັບນີ້ ສ້າງຂຶ້ນເພື່ອເປັນ ເຄື່ອງມືໃຫ້ແກ່ພະແນກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງຫ້ອງການ ຄຊກລ ປະຕິບັດພາລະບົດບາດຂອງຕົນຢ່າງຕິດພັນກັບວຽກງານຊ່ວຍເຫຼືອຄົນພິການ ແລະ ວຽກງານພັດທະນາອື່ນໆຢູ່ ສປປ ລາວ. ເຫັນໄດ້ວ່າ ເປັນບາດກ້າວທຳອິດໃນການສ້າງແຜນປະຕິບັດງານ ທີ່ເຊື່ອມໂຍງກະຊວງ, ຂະແໜງການ ແລະ ເປັນຕົວແທນໃຫ້ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງຕ່າງໆເຂົ້າກັນ. ໃນອະນາຄົດຈະເປັນເຄື່ອງມືເຮັດໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ການຊ່ວຍເຫຼືອຜູ້ພິການເຊື່ອມໂຍງເຂົ້າກັນເປັນຢ່າງດີ, ຊຶ່ງແຜນຍຸດທະສາດແຫ່ງຊາດການຊ່ວຍເຫຼືອ ຄົນພິການຈະໄດ້ບັນຈຸການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເຂົ້ານຳ, ທັງນີ້ກໍ່ເພື່ອໃຫ້ການຈັດຕັ້ງປະຕິບັດມີຄວາມຍືນຍົງ.

ຄວາມຕ້ອງການງົບປະມານສຳລັບຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດກ່ຽວກັບ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ 2014 –2020 ນີ້ສາມາດ ກຳນົດລະອຽດໄດ້ກໍ່ຕໍ່ເມື່ອ ບັນດາກິດຈະກຳຂອງແຜນຍຸດທະສາດດັ່ງກ່າວຖືກບັນຈຸເຂົ້າໃນແຜນຍຸດທະສາດ, ແຜນປະຕິບັດງານ ແລະ ງົບປະມານຂອງບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ.

ເຖິງຢ່າງໃດກໍ່ຕາມ, ຄຊກລ ສາມາດກຳນົດງົບປະມານສຳລັບວຽກງານທີ່ ຄຊກລ ຮັບຜິດຊອບໂດຍກົງ; ເສົາຄ້ຳທີ 1: **ການເກັບກຳຂໍ້ມູນ** ແລະ ເສົາຄ້ຳທີ 7: **ການປະສານງານ**. ໃນຕົວຈິງວຽກງານດັ່ງກ່າວໄດ້ກຳນົດຢູ່ໃນແຜນວຽກ ແລະ ແຜນງົບປະມານຂອງ ຄຊກລ. ໃນຕໍ່ໜ້າພະແນກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຂອງ ຄຊກລ ຈະກຳນົດແຜນວຽກ ແລະ ງົບປະມານ ແລະ ໃຫ້ກະຊວງທີ່ກ່ຽວຂ້ອງກຳນົດແຜນວຽກ ແລະ ແຜນງົບປະມານຂອງຕົນ ເພື່ອເປັນບ່ອນອີງໃນການລະດົມທຶນ.

ໃນປີ 2012 ງົບປະມານທັງໝົດທີ່ປະກອບສ່ວນເຂົ້າໃນຂະແໜງການແກ້ໄຂ ລບຕ ຢູ່ ສປປ ລາວ ມີປະມານ 30,5 ລ້ານ ໂດລາສະຫາລັດ; ໃນນັ້ນປະມານ 8,5 ລ້ານໂດລາສະຫາລັດ ຜ່ານພາກເອກະຊົນ ແລະ ໂຄງການລົງທຶນ ແລະ ປະມານ 22 ລ້ານໂດລາສະຫາລັດ ຜ່ານໂອດີເອ . ງົບປະມານດັ່ງກ່າວມີພຽງແຕ່ 1,5 ລ້ານໂດລາສະຫາລັດເທົ່ານັ້ນທີ່ນຳໃຊ້ເຂົ້າໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ[6]. ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດນີ້ໃຫ້ສຳເລັດໃນ 6 ປີຂ້າງໜ້າຕ້ອງການໃຫ້ງົບປະມານຈາກພາກລັດຖະບານ ແລະ ສາກົນ. ພ້ອມກັນນັ້ນ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຂອງ ຄຊກລ ຕ້ອງພະຍາຍາມທຸມເທສະຕິປັນຍາ ເພື່ອໃຫ້ມີຄວາມເອກະພາບຕໍ່ບັນດາເປົ້າໝາຍຂອງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສະບັບນີ້.

ບັນດາກິດກຳຕົ້ນຕໍ ເພື່ອກຳນົດບູລິມະສິດຄວາມເປັນໄປໄດ້ໃນການຂົນຂວາຍແຫຼ່ງທຶນງົບປະມານ ການຊ່ວຍເຫຼືອໃນຕໍ່ໜ້າແມ່ນໄດ້ລະບຸຢູ່ຂ້າງລຸ່ມນີ້. ສຳລັບບັນດາກິດຈະກຳລະອຽດ ໄດ້ກຳນົດໄວ້ຢູ່ໃນແຕ່ລະເສົາຄ້ຳຫຼັກຂອງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສະບັບນີ້.

[6] ຄັດຈາກບົດລາຍງານປະຈຳປີ 2012 ຂອງຂະແໜງການ ລບຕ.

## ພາກ V. ມາດຕາການໃນການຈັດຕັ້ງປະຕິບັດ.

1. ຈັດກອງປະຊຸມປຶກສາຫາລືກັບຄູ່ຮ່ວມງານຂອງບັນດາກະຊວງການ, ອົງການທຽບເທົ່າທີ່ກ່ຽວຂ້ອງ ແລະ ບັນດາອົງການຈັດຕັ້ງສາກົນ ເພື່ອໂຄສະນາເຜີຍແຜ່ໃຫ້ເຂົ້າໃຈເລິກເຊິ່ງກ່ຽ ວກັບເນື້ອໃນຂອງແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ເພີ່ມການຮ່ວມມືຈັດຕັ້ງປະຕິບັດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ຄົນພິການ. ກອງປະຊຸມດັ່ງກ່າວຈະເປັນໂອກາດໃຫ້ບັນດາຜູ້ສ້າງນະໂຍບາຍຂັ້ນສູງສາມາດເຂົ້າໃຈເນື້ອໃນຂອງແຜນຍຸດທະສາດດັ່ງກ່າວ ແລະ ສາມາດພິຈາລະນາຈັດສັນງົບປະມານເປັນຂອງກະຊວງ ແລະ ອົງການຂອງຕົນ ແລະ ຂົນຂວາຍຈາກຜູ້ໃຫ້ທຶນອື່ນໆ.

2. ຮ່ວມກັບຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ສຶກສາກົນໄກບໍລິການຕ່າງໆທີ່ມີໃນປະຈຸບັນ, ເປັນຕົ້ນ ແມ່ນການປິ່ນປົວການແພດ, ການຟື້ນຟູໜ້າທີ່ການ, ການສະໜັບສະໜູນສຸຂະພາບຈິດ ແລະ ການມີສ່ວນຮ່ວມໃນສັງຄົມ, ການຟື້ນຟູເສດຖະກິດ ແລະ ການບໍລິການການສຶກສາ ສຳລັບຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການຢູ່ ສປປ ລາວ.

3. ພິຈາລະນາບັນຈຸທີ່ປຶກສາ ເພື່ອຊ່ວຍລະດົມຂົນຂວາຍແຫຼ່ງທຶນ ແລະ ສ້າງຄວາມອາດສາມາດໃນວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ພິການ.

4. ບັນດາກະຊວງ, ອົງການທຽບເທົ່າ ທີ່ກ່ຽວຂ້ອງຕ້ອງພິຈາລະນາເອົາກິດຈະກຳ ທີ່ລະບຸຢູ່ໃນແຜນຍຸດທະສາດການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ບັນຈຸເຂົ້າໃນແຜນວຽກ ແລະ ແຜນງົບປະມານຂອງຕົນ.

5. ແຜນປະຕິບັດງານແຫ່ງຊາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ນີ້ຈະມີການປະເມີນຜົນຄວາມຄືບໜ້າໃນປີ 2017 ແລະ ປະເມີນຜົນສຸດທ້າຍໃນປີ 2020. ການປະເມີນຜົນດັ່ງກ່າວແມ່ນແນ່ໃສ່ການປະເມີນຜົນສຳເລັດຂອງບັດດາກິດຈະກຳ ແລະ ຕົວຊີ້ວັດ ທີ່ລະບຸຢູ່ໃນແຜນຍຸດທະສາດສະບັບນີ້.

6. ປະສານກັບບັນດາຜູ້ໃຫ້ທຶນທີ່ມີຄວາມເປັນໄປໄດ້ໃນການປະກອບສ່ວນເຂົ້າໃນວຽກງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ຊຶ່ງປະກອບມີ: ອົງການ ສປຊ, ທະນາຄານໂລກ, ອົງການອູຍນິເຊັບ, ອົງການຊ່ວຍເຫຼືອອົດສະຕາລີ, ອົງການອະນາໄມໂລກ, ອົງການໄອໂລ, ກອງທຶນພິເສດ ແລະ ພາກສ່ວນອື່ນໆ.

**ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ**

**ປະທານ ຄຊກລ**